ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ເອກະພາບ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 04 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 08-01-2024

# ຂໍ້ຕົກລົງ
## ວ່າດ້ວຍກົນໄກການປຶກສາຫາລື ພາຍໃຕ້ກອງປະຊຸມທຸລະກິດລາວ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ໜັງສືສະເໜີຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2169/ອຄ, ລົງວັນທີ 23 ພະຈິກ 2023.

**ນາຍົກລັດຖະມົນຕີ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ໂຄງປະກອບການຈັດຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ແລະ ກົນໄກການປຶກສາຫາລື ພາຍໃຕ້ກອງປະຊຸມທຸລະກິດລາວ ເພື່ອອຳນວຍຄວາມສະດວກໃຫ້ແກ່ພາກລັດ ແລະ ພາກທຸລະກິດ ໃນການປຶກສາຫາລື, ການແກ້ໄຂບັນຫາຕໍ່ການສ້າງຕັ້ງ ແລະ ດຳເນີນທຸລະກິດ ຊຶ່ງມີຜົນກະທົບຕໍ່ສະພາບແວດລ້ອມການດຳເນີນທຸລະກິດ ຢູ່ ສປປ ລາວ ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດສອດຄ່ອງກັບກົດໝາຍ ແລະ ລະບຽບການ.

### ມາດຕາ 2 ກົນໄກການປຶກສາຫາລື ພາຍໃຕ້ກອງປະຊຸມທຸລະກິດລາວ

ກົນໄກການປຶກສາຫາລື ພາຍໃຕ້ກອງປະຊຸມທຸລະກິດລາວ ແມ່ນກົນໄກອຳນວຍຄວາມສະດວກ ໃຫ້ແກ່ການປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກທຸລະກິດ ເພື່ອໃຫ້ພາກທຸລະກິດ ພາຍໃນ ຫຼື ຕ່າງປະເທດ ນຳເອົາບັນຫາ ແລະ ຜົນກະທົບຕໍ່ການສ້າງຕັ້ງ ແລະ ການດຳເນີນທຸລະກິດ, ສະເໜີປັບປຸງ ຫຼື ຫຼຸດຜ່ອນຂໍ້ຈຳກັດດ້ານລະບຽບການ, ປະກອບຄຳຄິດຄຳເຫັນຕໍ່ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການທີ່ຕິດພັນກັບການດຳເນີນທຸລະກິດທີ່ພາກລັດວາງອອກ ແລະ ວິທີແກ້ໄຂ ຕໍ່ຂະແໜງການຈາກພາກລັດ ເພື່ອພິຈາລະນາ ແລະ ຊຸກຍູ້, ຕິດຕາມ ການຈັດຕັ້ງປະຕິບັດຜົນການປຶກສາຫາລື ແລະ ການແກ້ໄຂບັນຫາ ຢ່າງຕໍ່ເນື່ອງ.

ກົນໄກການປຶກສາຫາລື ພາຍໃຕ້ກອງປະຊຸມທຸລະກິດລາວ ຂຽນເປັນພາສາອັງກິດວ່າ "Lao Business Forum – LBF".

ມາດຕາ 3 ຫຼັກການເຮັດວຽກຂອງກົນໄກການປຶກສາຫາລືພາຍໃຕ້ກອງປະຊຸມທຸລະກິດລາວ

ກົນໄກການປຶກສາຫາລືພາຍໃຕ້ກອງປະຊຸມທຸລະກິດລາວ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງ, ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ປະຕິບັດຕາມພາລະບົດບາດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

3. ປຶກສາຫາລືເປັນໝູ່ຄະນະ, ໂດຍອີງໃສ່ສຽງສ່ວນຫຼາຍ ມີການແບ່ງຄວາມຮັບຜິດຊອບ, ມີຄວາມໂປ່ງໃສ, ກວດສອບໄດ້, ເປີດເຜີຍ ແລະ ມີຄວາມສະເໝີພາບ;

4. ບັນຫາທີ່ຍົກຂຶ້ນຕ້ອງເປັນບັນຫາລວມຂອງຂະແໜງທຸລະກິດໃດໜຶ່ງ ທີ່ບໍ່ແມ່ນບັນຫາຂອງຫົວໜ່ວຍທຸລະກິດໃດໜຶ່ງ;

5. ບັນຫາທີ່ນຳສະເໜີຕ້ອງໄດ້ມີການສຶກສາ ແລະ ວິເຄາະສາເຫດຢ່າງລະອຽດ ແລະ ມີຂໍ້ສະເໜີວິທີແກ້ໄຂທີ່ຈະແຈ້ງ.

## ໝວດທີ 2
## ໂຄງປະກອບການຈັດຕັ້ງ, ສິດ ແລະ ໜ້າທີ່

ມາດຕາ 4 ໂຄງປະກອບການຈັດຕັ້ງ

ໂຄງປະກອບການຈັດຕັ້ງຂອງກົນໄກການປຶກສາຫາລື ພາຍໃຕ້ກອງປະຊຸມທຸລະກິດລາວ ປະກອບມີ: ຄະນະຊີ້ນຳ, ຄະນະປະສານງານພາກລັດ, ໜ່ວຍງານປຶກສາຫາລືພາກທຸລະກິດ ແລະ ກອງເລຂາ.

ມາດຕາ 5 ໂຄງປະກອບຂອງຄະນະຊີ້ນຳ

ໂຄງປະກອບຂອງຄະນະຊີ້ນຳ ປະກອບມີດັ່ງນີ້:

1. ທ່ານ ຮອງນາຍົກລັດຖະມົນຕີ ເປັນຫົວໜ້າ;
2. ທ່ານ ລັດຖະມົນຕີ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຮອງຫົວໜ້າ ແລະ ທັງເປັນຜູ້ປະຈຳການ;
3. ທ່ານ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນຮອງຫົວໜ້າ;
4. ທ່ານ ຮອງລັດຖະມົນຕີ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ ແລະ ທັງເປັນຫົວໜ້າຄະນະປະສານງານພາກລັດ;
5. ທ່ານ ຮອງລັດຖະມົນຕີ, ກະຊວງແຜນການ ແລະ ການລົງທຶນ ເປັນຄະນະ;
6. ທ່ານ ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນຄະນະ;
7. ທ່ານ ຮອງປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນຄະນະ ແລະ ທັງເປັນຫົວໜ້າກອງເລຂາ.

ມາດຕາ 6 ສິດ ແລະ ໜ້າທີ່ຂອງຄະນະຊີ້ນຳ

ສິດ ແລະ ໜ້າທີ່ຂອງຄະນະຊີ້ນຳ ມີດັ່ງນີ້:

1. ຊີ້ນຳລວມ ຕໍ່ການຈັດຕັ້ງປະຕິບັດວຽກງານກອງປະຊຸມທຸລະກິດລາວ;

2. ຊີ້ນຳການແກ້ໄຂບັນຫາທີ່ຍົກຂຶ້ນ ໃນກອງປະຊຸມທຸລະກິດລາວ;

3. ລາຍງານຄວາມຄືບໜ້າຂອງບັນຫາ ແລະ ສະເໜີວິທີທາງແກ້ໄຂຕໍ່ລັດຖະບານ;

4. ກຳນົດວາລະ ແລະ ເນື້ອໃນ ຂອງກອງປະຊຸມທຸລະກິດລາວ ປະຈຳປີ;

5. ຈັດກອງປະຊຸມຜັນຂະຫຍາຍທິດຊີ້ນຳຂອງກອງປະຊຸມທຸລະກິດລາວ ແລະ ອອກແຈ້ງການໃຫ້ຂະແໜງການກ່ຽວຂ້ອງຈັດຕັ້ງປະຕິບັດຜົນຂອງກອງປະຊຸມທຸລະກິດລາວ;

6. ສະເໜີທິດທາງ ແລະ ນະໂຍບາຍ ທີ່ຕິດພັນກັບການສົ່ງເສີມ ແລະ ການພັດທະນາພາກທຸລະກິດ ແຕ່ລະໄລຍະ ຕໍ່ລັດຖະບານ.

ມາດຕາ 7 ໂຄງປະກອບຂອງຄະນະປະສານງານພາກລັດ

ຄະນະປະສານງານຂອງພາກລັດ ປະກອບມີດັ່ງນີ້:

1. ທ່ານ ຮອງລັດຖະມົນຕີ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຫົວໜ້າ;

2. ທ່ານ ຫົວໜ້າຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຮອງຫົວໜ້າ; ແລະ ເປັນຜູ້ປະຈຳການ;

3. ທ່ານ ຫົວໜ້າຫ້ອງການ, ກະຊວງແຜນການ ແລະ ການລົງທຶນ ເປັນຄະນະ;

4. ທ່ານ ຫົວໜ້າຫ້ອງການ, ກະຊວງການເງິນ ເປັນຄະນະ;

5. ທ່ານ ຫົວໜ້າຫ້ອງການ, ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;

6. ທ່ານ ຫົວໜ້າຫ້ອງການ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ;

7. ທ່ານ ຫົວໜ້າຫ້ອງການ, ກະຊວງກະສິກຳ ແລະ ປ່າໄມ້ ເປັນຄະນະ;

8. ທ່ານ ຫົວໜ້າຫ້ອງການ, ທະນາຄານແຫ່ງ ສປປ ລາວ ເປັນຄະນະ;

9. ທ່ານ ຫົວໜ້າຫ້ອງການ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຄະນະ;

10. ທ່ານ ຫົວໜ້າຫ້ອງການ, ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຄະນະ;

11. ຕາງໜ້າຈາກພາກສ່ວນອື່ນທີ່ກ່ຽວຂ້ອງ ເປັນຄະນະ.

ມາດຕາ 8 ສິດ ແລະ ໜ້າທີ່ຂອງຄະນະປະສານງານພາກລັດ

ສິດ ແລະ ໜ້າທີ່ຂອງຄະນະປະສານງານພາກລັດ ມີດັ່ງນີ້:

1. ຕິດຕາມຄວາມຄືບໜ້າການແກ້ໄຂບັນຫາ ທີ່ຕິດພັນກັບອົງກອນຂອງຕົນ ແລະ ລາຍງານການຈັດຕັ້ງປະຕິບັດໃຫ້ກັບຄະນະນຳຂອງຕົນ ແລະ ຄະນະຊີ້ນຳກອງປະຊຸມທຸລະກິດລາວ ເປັນປະຈຳ;

2. ປະສານສົມທົບກັບບັນດາອົງການຈັດຕັ້ງພາກລັດ, ພາກທຸລະກິດ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຊຸກຍູ້, ຕິດຕາມ ການແກ້ໄຂບັນຫາການດຳເນີນທຸລະກິດ ຢ່າງຕໍ່ເນື່ອງ;

3. ຜັນຂະຫຍາຍທິດຊີ້ນຳກອງປະຊຸມທຸລະກິດລາວແຕ່ລະຄັ້ງ ໃຫ້ພາກສ່ວນທີ່ກ່ຽວຂ້ອງຂອງຕົນຮັບຊາບ ແລະ ຈັດຕັ້ງປະຕິບັດ;

4. ເຮັດໜ້າທີ່ເປັນເສນາທິການໃຫ້ຄະນະຊີ້ນຳ;

5. ຈັດກອງປະຊຸມຄະນະປະສານງານພາກລັດ ແລະ ກອງປະຊຸມຄະນະຊີ້ນຳ;

6. ຜູ້ປະຈຳການຂອງຄະນະປະສານງານພາກລັດ ເຮັດວຽກຮ່ວມກັບກອງເລຂາ ເພື່ອສຶກສາ ແລະ ຄົ້ນຄວ້າ ບັນຫາທີ່ພາກທຸລະກິດຍົກຂຶ້ນ ແລະ ປະກອບຄຳເຫັນເພື່ອຊ່ວຍໜ່ວຍງານປຶກສາຫາລືພາກທຸລະກິດ ໃນການກຳນົດບັນຫາບູລິມະສິດ ແລະ ການສ້າງບົດສະເໜີບັນຫາ.

**ມາດຕາ 9 ໂຄງປະກອບຂອງໜ່ວຍງານປຶກສາຫາລືພາກທຸລະກິດ**

ໜ່ວຍງານປຶກສາຫາລືພາກທຸລະກິດ ປະກອບມີດັ່ງນີ້:

1. ໜ່ວຍງານປຶກສາຫາລືພາກທຸລະກິດ ຂະແໜງການຜະລິດ;
2. ໜ່ວຍງານປຶກສາຫາລືພາກທຸລະກິດ ຂະແໜງການບໍລິການ;
3. ໜ່ວຍງານປຶກສາຫາລືພາກທຸລະກິດ ຂະແໜງການຄ້າ, ການຂົນສົ່ງ ແລະ ໂລຈິສຕິກ;
4. ໜ່ວຍງານປຶກສາຫາລືພາກທຸລະກິດ ຂະແໜງການທ່ອງທ່ຽວ;
5. ໜ່ວຍງານປຶກສາຫາລືພາກທຸລະກິດ ຂະແໜງການຜະລິດ ແລະ ປຸງແຕ່ງກະສິກຳ;
6. ໜ່ວຍງານປຶກສາຫາລືພາກທຸລະກິດ ຂະແໜງການບໍລິການທາງດ້ານການເງິນ;
7. ໜ່ວຍງານປຶກສາຫາລືພາກທຸລະກິດ ຂະແໜງການໄອຊີທີ;
8. ໜ່ວຍງານປຶກສາຫາລືພາກທຸລະກິດ ຂະແໜງການພະລັງງານໄຟຟ້າ;
9. ໜ່ວຍງານປຶກສາຫາລືພາກທຸລະກິດ ຂະແໜງການຫັດຖະກຳ;
10. ໜ່ວຍງານອື່ນຕາມການຕົກລົງຂອງປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຕາມຄວາມຈຳເປັນແຕ່ລະໄລຍະ.

**ມາດຕາ 10 ສິດ ແລະ ໜ້າທີ່ຂອງໜ່ວຍງານປຶກສາຫາລືພາກທຸລະກິດ**

ສິດ ແລະ ໜ້າທີ່ຂອງໜ່ວຍງານປຶກສາຫາລືພາກທຸລະກິດ ມີດັ່ງນີ້:

1. ຈັດກອງປະຊຸມເປີດກວ້າງ ເພື່ອປຶກສາຫາລືບັນຫາທີ່ຕິດພັນກັບຂະແໜງການຂອງຕົນ;
2. ກຳນົດບັນຫາບູລິມະສິດ ທີ່ກະທົບຕໍ່ສະມາຊິກຂອງໜ່ວຍງານຂະແໜງການຂອງຕົນ;
3. ສ້າງບົດສະເໜີບັນຫາທີ່ມີວິທີແກ້ໄຂຊັດເຈນ;
4. ເປັນເຈົ້າການໃນການສະເໜີບັນຫາ ແລະ ປຶກສາຫາລືກັບຂະແໜງການກ່ຽວຂ້ອງ ໃນກອງປະຊຸມປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກທຸລະກິດ ລະດັບວິຊາການ;
5. ຕິດຕາມຄວາມຄືບໜ້າຂອງການແກ້ໄຂບັນຫາທີ່ຂະແໜງຕົນຍົກຂຶ້ນ ແລະ ລາຍງານຜົນການຈັດຕັ້ງປະຕິບັດ ໃຫ້ກັບປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ຄະນະຊີ້ນຳກອງປະຊຸມທຸລະກິດລາວ ເປັນປະຈຳ;

6. ປະສານສົມທົບກັບບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງຂອງພາກລັດ ເພື່ອຊຸກຍູ້, ຕິດຕາມ ການແກ້ໄຂບັນຫາການດໍາເນີນທຸລະກິດ ຢ່າງຕໍ່ເນື່ອງ.

**ມາດຕາ 11 ໂຄງປະກອບຂອງກອງເລຂາ**

ກອງເລຂາ ປະກອບມີດັ່ງນີ້:

1. ທ່ານ ຮອງປະທານ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ເປັນຫົວໜ້າ;
2. ທ່ານ ເລຂາທິການ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ເປັນຮອງຫົວໜ້າ;
3. ທ່ານ ຮອງເລຂາທິການ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ເປັນຄະນະ;
4. ທ່ານ ຫົວໜ້າພະແນກພົວພັນພາກລັດ ແລະ ປັບປຸງແວດລ້ອມການດໍາເນີນທຸລະກິດ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ເປັນຄະນະ;
5. ວິຊາການພະແນກພົວພັນພາກລັດ ແລະ ປັບປຸງແວດລ້ອມການດໍາເນີນທຸລະກິດ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ເປັນຜູ້ຊ່ວຍວຽກ.

**ມາດຕາ 12 ສິດ ແລະ ໜ້າທີ່ຂອງກອງເລຂາ**

ສິດ ແລະ ໜ້າທີ່ຂອງກອງເລຂາ ມີດັ່ງນີ້:

1. ເປັນເສນາທິການໃຫ້ແກ່ໜ່ວຍງານປຶກສາຫາລືພາກທຸລະກິດ;
2. ຊ່ວຍສ້າງຕັ້ງໜ່ວຍງານປຶກສາຫາລືພາກທຸລະກິດ ທີ່ຈໍາເປັນໃນແຕ່ລະໄລຍະ;
3. ກໍານົດຮູບແບບ ແລະ ວິທີການເຄື່ອນໄຫວຂອງໜ່ວຍງານປຶກສາຫາລືພາກທຸລະກິດ;
4. ຊ່ວຍໃນການກໍານົດບັນຫາ, ຈັດບຸລິມະສິດ ແລະ ສ້າງບົດສະເໜີແກ້ໄຂບັນຫາ;
5. ອໍານວຍຄວາມສະດວກໃນການປຶກສາຫາລື, ຕິດຕາມ ແລະ ລາຍງານຄວາມຄືບໜ້າຂອງການແກ້ໄຂບັນຫາ ເປັນປະຈໍາ;
6. ບັນທຶກກອງປະຊຸມພາກທຸລະກິດລາວ ປະຈໍາປີ ຮ່ວມກັບຜູ້ປະຈໍາການຂອງຄະນະປະສານງານພາກລັດ;
7. ໃຫ້ຄໍາປຶກສາດ້ານວິຊາການ ແລະ ສ້າງຄວາມເຂັ້ມແຂງໃຫ້ໜ່ວຍງານປຶກສາຫາລືພາກທຸລະກິດ.

## ໝວດທີ 3
## ຂັ້ນຕອນກົນໄກປຶກສາຫາລື ພາຍໃຕ້ກອງປະຊຸມທຸລະກິດລາວ

**ມາດຕາ 13 ຂັ້ນຕອນກົນໄກປຶກສາຫາລື ພາຍໃຕ້ກອງປະຊຸມທຸລະກິດລາວ**

ກົນໄກປຶກສາຫາລືພາຍໃຕ້ກອງປະຊຸມທຸລະກິດ ປະກອບມີ 4 ຂັ້ນຕອນ ດັ່ງນີ້:

1. ການກໍານົດບັນຫາບຸລິມະສິດຂອງພາກທຸລະກິດ;
2. ກອງປະຊຸມປຶກສາຫາລືລະຫວ່າງ ພາກລັດ ແລະ ພາກທຸລະກິດ;
3. ການກະກຽມ ແລະ ຈັດກອງປະຊຸມທຸລະກິດລາວ;

4. ການຜັນຂະຫຍາຍຜົນຂອງກອງປະຊຸມທຸລະກິດລາວ.

**ມາດຕາ 14 ການກຳນົດບັນຫາບູລິມະສິດຂອງພາກທຸລະກິດ**

ໃນຂັ້ນຕອນການກຳນົດບັນຫາບູລິມະສິດຂອງພາກທຸລະກິດ, ພາກທຸລະກິດ ກຳນົດບັນຫາທີ່ກະທົບຕໍ່ການສ້າງຕັ້ງ ແລະ ດຳເນີນທຸລະກິດ ທີ່ເປັນບູລິມະສິດ ພ້ອມທັງຂໍ້ສະເໜີວິທີແກ້ໄຂທີ່ຕ້ອງການໃຫ້ຂະແໜງການກ່ຽວຂ້ອງຂອງພາກລັດພິຈາລະນາ. ເພື່ອກຳນົດບັນຫາບູລິມະສິດ ໜ່ວຍງານປຶກສາຫາລືພາກທຸລະກິດ ສາມາດຈັດກອງປະຊຸມຂອງໜ່ວຍງານຕົນຂຶ້ນ ຕາມຂະແໜງການ ຫຼື ຕາມຫົວຂໍ້ບັນຫາ ຫຼື ເກັບກຳບັນຫາຈາກສະມາຊິກຂອງໜ່ວຍງານຂອງຕົນ ແຕ່ລະໄລຍະ ຕາມຄວາມເໝາະສົມ ເພື່ອສັງລວມ, ຄັດຈ້ອນ ແລະ ຈັດລຽງບູລິມະສິດຂອງບັນຫາທີ່ກະທົບຕໍ່ຂະແໜງການຂອງຕົນ ກະກຽມໃຫ້ແກ່ກອງປະຊຸມປຶກສາຫາລືກັບພາກລັດ ໃນລະດັບວິຊາການ ແລະ/ຫຼື ລະດັບນະໂຍບາຍ.

**ມາດຕາ 15 ກອງປະຊຸມປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກທຸລະກິດ**

ກອງປະຊຸມປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກທຸລະກິດ ມີລະດັບວິຊາການ ແລະ ລະດັບການນຳຂອງຂະແໜງການ ມີເປົ້າໝາຍເພື່ອແກ້ໄຂບັນຫາບູລິມະສິດທີ່ພາກທຸລະກິດຍົກຂຶ້ນ. ກອງປະຊຸມນີ້ຈັດຂຶ້ນ ລະຫວ່າງ ຕົວແທນພາກທຸລະກິດ ແລະ ຂະແໜງການກ່ຽວຂ້ອງຂອງພາກລັດ ເພື່ອຕົກລົງຊ່ອງທາງ ແລະ ວິທີການແກ້ໄຂບັນຫາ. ຫົວໜ້າໜ່ວຍງານປຶກສາຫາລືພາກທຸລະກິດ ແລະ ຄະນະປະສານງານພາກລັດ ເປັນຜູ້ກຳນົດຄວາມຈຳເປັນ ແລະ ຮູບແບບຂອງການຈັດກອງປະຊຸມແຕ່ລະຄັ້ງ.

**ມາດຕາ 16 ການກະກຽມ ແລະ ຈັດກອງປະຊຸມທຸລະກິດລາວ**

ການກະກຽມ ແລະ ຈັດກອງປະຊຸມທຸລະກິດລາວ ປະກອບມີ 3 ຂັ້ນຕອນ ດັ່ງນີ້:

1. ຈັດກອງປະຊຸມຄະນະປະສານງານພາກລັດ ເພື່ອຕິດຕາມຄວາມຄືບໜ້າ ແລະ ຊຸກຍູ້ການແກ້ໄຂບັນຫາທີ່ຜ່ານການປຶກສາຫາລື ລະຫວ່າງພາກລັດ ແລະ ພາກທຸລະກິດ ລະດັບວິຊາການ ແລະ/ຫຼື ລະດັບການນຳຂອງຂະແໜງການ, ກອງປະຊຸມຄະນະປະສານງານພາກລັດ ຈັດຂຶ້ນທຸກໆໄຕມາດ ເພື່ອກະກຽມລາຍງານໃຫ້ແກ່ຄະນະຊີ້ນຳ.

2. ຈັດກອງປະຊຸມຄະນະຊີ້ນຳ ເພື່ອຕິດຕາມຄວາມຄືບໜ້າ, ໃຫ້ທິດຊີ້ນຳແກ່ຂະແໜງການກ່ຽວຂ້ອງໃນການແກ້ໄຂບັນຫາ ແລະ ກະກຽມກອງປະຊຸມທຸລະກິດລາວ ປະຈຳປີ. ກອງປະຊຸມຄະນະຊີ້ນຳ ຈັດຂຶ້ນທຸກໆ 6 ເດືອນ ໂດຍມີຄະນະປະສານງານພາກລັດ ເປັນຜູ້ກະກຽມກອງປະຊຸມ.

3. ຈັດກອງປະຊຸມທຸລະກິດລາວ ປະຈຳປີ ໂດຍການເປັນປະທານຂອງທ່ານນາຍົກລັດຖະມົນຕີ. ກອງປະຊຸມທຸລະກິດລາວ ປະຈຳປີ ຈັດຂຶ້ນເພື່ອສະຫຼຸບ ແລະ ຕີລາຄາ ຄວາມຄືບໜ້າຂອງການແກ້ໄຂບັນຫາ ທີ່ກະທົບຕໍ່ການສ້າງຕັ້ງ ແລະ ການດຳເນີນທຸລະກິດ ແລະ ກຳນົດທິດທາງແກ້ໄຂບັນຫາທີ່ຍັງຄົງຄ້າງ.

**ມາດຕາ 17 ການຜັນຂະຫຍາຍຜົນຂອງກອງປະຊຸມທຸລະກິດລາວ**

ໃນການຜັນຂະຫຍາຍຜົນຂອງກອງປະຊຸມທຸລະກິດລາວ, ປະທານກອງປະຊຸມທຸລະກິດລາວ ອອກມະຕິຂອງກອງປະຊຸມທຸລະກິດລາວ ຕາມການສະເໜີຂອງຄະນະຊີ້ນຳ ເພື່ອເປັນບ່ອນອີງໃຫ້ແກ່ການຜັນຂະຫຍາຍຜົນຂອງກອງປະຊຸມທຸລະກິດລາວ ປະຈຳປີ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

ມາດຕາ 18 ງົບປະມານ

ງົບປະມານການເຄື່ອນໄຫວຂອງກອງປະຊຸມທຸລະກິດລາວ ແມ່ນນຳໃຊ້ງົບປະມານ ທີ່ໄດ້ຮັບການສະໜັບສະໜູນຈາກລັດຖະບານ, ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຂອງພາກທຸລະກິດ.

ມາດຕາ 19 ການຈັດຕັ້ງປະຕິບັດ

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ແລະ ທຸກພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ມາດຕາ 20 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ